ລັດຖະບານແຫ່ງລັດວິກຕໍເຣັຍໄດ້ມີສັນຍາລັກອັນໃໝ່ເພື່ອຊ່ວຍໃຫ້ບັນດາຄອບຄົວໃນວິກຕໍເຣັຍສາມາດຊອກຫາໂຮງຮຽນອະນຸບານໄດ້. ສັນຍາລັກນີ້ເອີ້ນວ່າ Kinder Tick.

ທ່ານຈະເຫັນສັນຍາລັກນີ້ເວລາທ່ານເຂົ້າໄປໃນຕຶກໃດໜຶ່ງທີ່ມີຫ້ອງຮຽນອະນຸບານຫຼືມີບໍລິການສຳລັບເດັກນ້ອຍໃນໄວຮ່ຳຮຽນຕົ້ນໆ. ນອກນີ້ ທ່ານຍັງອາດຈະເຫັນສັນຍາລັກນີ້ຢູ່ໃນເວັບໄຊ້ຂອງເຂົາເຈົ້າ.

ການບໍລິການຫ້ອງຮຽນອະນຸບານນີ້ເປັນສິ່ງສຳຄັນຢ່າງແທ້ຈິງຕໍ່ການສຶກສາຂອງເດັກນ້ອຍ.

Kinder Tick ມີລັກສະນະດັ່ງນີ້.

KINDERGARTEN
Victorian Government Approved

ຂີດໝາຍ ຕິກ ໝາຍຄວາມວ່າ ບໍລິການດັ່ງກ່າວໄດ້ຮັບການອຸປະຖຳໂດຍລັດຖະບານແຫ່ງລັດວິກຕໍເຣັຍ.

ລູກໆຂອງທ່ານຈະໄດ້ຮ່ຳຮຽນຈາກນາຍຄູທີ່ມີຄຸນວຸດທິໂດຍຜ່ານການຫຼິ້ນ.

ຍົກຕົວຢ່າງ, ເດັກນ້ອຍຈະໄດ້ຮຽນກ່ຽວກັບພາສາ, ໂຕເລກ ແລະ ຮູບແບບລວດລາຍ. ເຂົາເຈົ້າຈະໄດ້ຮຽນຄົບໝູ່ເພື່ອນ, ແບ່ງປັນແລະຮຽນຟັງ. ນອກນີ້ ເຂົາເຈົ້າຍັງຈະໄດ້ຮຽນທັກສະຢ່າງອື່ນເພື່ອຊ່ວຍໃຫ້ຕຽມພ້ອມໄປເຂົ້າໂຮງຮຽນ.

ນັບຈາກປີ 2022, ເດັກນ້ອຍໃນລັດ ວິກຕໍເຣັຍຈະສາມາດເຂົ້າຮຽນອະນຸບານສອງປີກ່ອນເຂົ້າໂຮງຮຽນ.

ໂຄງການຫ້ອງຮຽນອະນຸບານສາມາດເປັນພາກສ່ວນໜຶ່ງຂອງການດູແລເດັກ. ພ້ອມດຽວກັນມັນກໍສາມາດເປັນໂຄງການທີ່ແຍກຕ່າງຫາກໄດ້ດ້ວຍ.

ໃຫ້ຊອກເບິ່ງເຄື່ອງໝາຍ Kinder Tick ຢູ່ໃນຊຸມຊົນຂອງທ່ານ. ໃຫ້ເວົ້າກັບບັນດາຄູທີ່ຫ້ອງຮຽນອະນຸບານຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ.